


## “Blossoms Shanghai” ເຮັດໃຫ້ຄົນທັງຫຼາຍນິຍົມໄປທ່ຽວນະຄອນຊຽງໄຮ້

ນັບແຕ່ຕົ້ນປີມານີ້, ຄຽງຄູ່ກັບລະຄອນໂທລະພາບເລື່ອງ “Blossoms Shanghai” ກຳກັບໂດຍ ທ່ານ ວັ່ງກາວາຍ (Kar-WaiWong) ຜູ້ກຳກັບທີ່ມີຊື່ສຽງຂອງຮົງກົງຈີນ ແລະ ມີເນື້ອໃນກ່ຽວກັບຊີວິດໃນເມືອງຂອງນະຄອນຊຽງໄຮ້ໃນຊຸມປີ 1990, ໄດ້ອອກອາກາດທາງຊ່ອງໂທລະພາບຕ່າງໆຂອງຈີນ, ຄົນທັງຫຼາຍ ໄດ້ສົນໃຈນຳພູມສາດ, ວັດທະນະທຳ ແລະ ປະຫວັດສາດ ຂອງນະຄອນຊຽງໄຮ້ ນັບມື້ນັບຫຼາຍຂຶ້ນ. ຈາກຖະໜົນໃນເມືອງ ຈົນເຖິງສູນຖ່າຍທຳຮູບເງົາ ແລະ ໂທລະພາບ, ຈາກຮ້ານອາຫານຕ່າງໆ ຈົນເຖິງຫໍວິຈິດສິນເຫຼົ່ານີ້ເປັນຕົ້ນ, ປະຊາຊົນ ແລະ ນັກທ່ອງທ່ຽວທັງຫຼາຍ ໄດ້ພາກັນໄປທ່ຽວແຫ່ງຕ່າງໆ ທີ່ໄດ້ຖ່າຍທຳໃນລະຄອນໂທລະພາບຕາມໆກັນ.

ອາຫານທີ່ແຊບນົວ ທີ່ສະແດງອອກໃນເລື່ອງ “Blossoms Shanghai” ເຊັ່ນ: ເຂົ້າໜົມກະດູກຂ້າງໝູທີ່ນາງສາວວາງ ມັກທີ່ສຸດ, ພ້ອມທັງຈືນປາເຫຼືອງ, ເຂົ້າປຽກເຂົ້າ, ຕີນໄກ່, ຈືນເຂົ້າໜົມໃສ້ຜັກກາດຫໍ ເປັນຕົ້ນ ລ້ວນແຕ່ໄດ້ຮັບຄວາມນິຍົມຊົມຊອບ ຈາກນັກທ່ອງທ່ຽວທີ່ມາຈາກແຫ່ງຕ່າງໆ. ໂຕເລກຂໍ້ມູນກ່ຽວກັບການຂາຍອາຫານຂອງ Meituan ສະແດງໃຫ້ເຫັນວ່າ: ນັບແຕ່ສາຍລະຄອນໂທລະພາບເລື່ອງ “Blossoms Shanghai” ເປັນຕົ້ນມາ, ຈຳນວນລູກຄ້າທີ່ສັ່ງຊື້ອາຫານຊຽງໄຮ້ ທີ່ໄດ້ສະແດງອອກໃນລະຄອນຕາມແອັບ Meituan ລ້ວນແຕ່ໄດ້ເພີ່ມຂຶ້ນໃນລະດັບຕ່າງກັນ. ໃນນັ້ນ, ການຄົ້ນຫາເຂົ້າໜົມກະດູກຂ້າງໝູຢູ່ຕາມອິນເຕີເນັດ ໄດ້ເພີ່ມຂຶ້ນ 10 ເທົ່າ, ໃບສັ່ງຊື້ອາຫານທາງອິນເຕີເນັດໄດ້ເພີ່ມຂຶ້ນ 300% ເມື່ອທຽບໃສ່ອາທິດຜ່ານມາ. ສ່ວນໂຮງໂຮມສັນຕິພາບ ແລະ ຮ້ານອາຫານຖາຍເຊິ່ງຢວນ ທີ່ໄດ້ສະແດງອອກໃນລະຄອນລ້ວນແຕ່ໄດ້ຂາຍຊຸດອາຫານສ້າງສັນທີ່ສົມທົບກັບ “Blossoms Shanghai” ໄດ້ກາຍເປັນຫົວຂໍ້ເດັ່ນໃນສື່ສັງຄົມອອນລາຍ.

ໃນຂະນະດຽວກັນ, ມີລູກຄ້າຫຼາຍຄົນ ໄດ້ແບ່ງປັນເຄັດລັບກ່ຽວກັບລະຄອນໂທລະພາບເລື່ອງ “Blossoms Shanghai” ຢູ່ຕາມແອັບ Dianping, ຈຳນວນບົດບັນທຶກແບ່ງປັນຄວາມຮູ້ສຶກທີ່ກ່ຽວຂ້ອງ ໄດ້ເພີ່ມຂຶ້ນ 540%. ນອກນີ້, ມີເຈົ້າຂອງຮ້ານຈຳນວນໜຶ່ງ ໄດ້ຂີດໝາຍເສັ້ນທາງທ່ອງທ່ຽວໃນຕົວເມືອງຊຽງໄຮ້ ທີ່ກ່ຽວຂ້ອງກັບລະຄອນ, ສາມາດໄປທ່ຽວຖະໜົນຮວງເຫີ, ໂຮງແຮມສັນຕິພາບ ເປັນຕົ້ນ ພ້ອມທັງໄດ້ມີການອະທິບາຍດ້ວຍພາສາຈີນກາງ ແລະ ພາສາຊຽງໄຮ້ ຊຶ່ງກໍໄດ້ຮັບຄວາມນິຍົມຊົມຊອບຈາກນັກທ່ອງທ່ຽວຫຼາຍ.

ທ່ານ ເວີ້ຍສຽວອ່ານ (Wei Xiao’an) ຫົວໜ້າຜູ້ຊ່ຽວຊານສະມາຄົມຕົວເມືອງທ່ອງທ່ຽວໂລກ ປະທານສະມາຄົມທ່ອງທ່ຽວຈີນ ສາຂາການພັກຜ່ອນຢ່ອນໃຈ ເຫັນວ່າ: “Blossoms Shanghai” ຫາກໍ່ມີຜົນສະທ້ອນເກີດຂຶ້ນໃນເບື້ອງຕົ້ນ, ຊຽງໄຮ້ຈະກາຍເປັນຕົວເມືອງທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມຊົມຊອບຫຼາຍໃນໄລຍະຕໍ່ໜ້າ, ອາຫານຊຽງໄຮ້ ກໍຈະໄດ້ຮັບຄວາມນິຍົມຊົມຊອບເຊັ່ນກັນ ຊຶ່ງສະພາບການແບບນີ້ຈະເກີດຂຶ້ນໃນໄລຍະພັກບຸນກຸດຈີນ ທີ່ເປັນເວລາ 9 ວັນໃນໄວໆນີ້.

ແຫຼ່ງຂ່າວ: ໜັງສືພິມໄວໜຸ່ມຈີນ, ໜັງສືພິມການທະນາຄານ ແລະ ການລົງທຶນ ແລະ ອື່ນໆ, ພາບໂດຍ: ສຳນັກຂ່າວຊິນຮວາ


















## ຊາວໜຸ່ມລາວ ເວົ້າວ່າ: ທາງລົດໄຟ ໄດ້ປ່ຽນແປງພວກເຂົາ

ຄຽງຄູ່ກັບທາງລົດໄຟລາວ-ຈີນ ໄດ້ເປີດນຳໃຊ້ຂະບວນລົດໄຟໂດຍສານສາກົນ ເປັນຕົ້ນມາ, ການຂີ່ລົດໄຟຈາກນະຄອນຄຸນໝິງ ແຕ່ເຊົ້າ ຈະສາມາດເດີນທາງໄປເຖິງນະຄອນຫຼວງວຽງຈັນ ໃນຕອນບ່າຍ ຊຶ່ງໄດ້ອຳນວຍຄວາມສະດວກຫຼາຍກວ່າເກົ່າ ໃຫ້ແກ່ຊາວໜຸ່ມລາວທີ່ມາຮຽນ ຫຼື ເຮັດວຽກຢູ່ຈີນ.

ນາງ ສູໄທຮວາ ນັກສຶກສາລາວ ທີ່ມາຈາກນະຄອນຫຼວງວຽງຈັນ ເຫັນວ່າ: ທາງລົດໄຟລາວ-ຈີນ ໄດ້ນຳເອົາການປ່ຽນແປງອັນໃຫຍ່ຫຼວງມາໃຫ້ແກ່ຊີວິດຂອງຕົນ, ນາງ ເວົ້າວ່າ: ແຕ່ກ່ອນ, ຂ້ອຍ ແລະ ໝູ່ຮ່ວມຮຽນຂອງຂ້ອຍ ຕ້ອງອອກເດີນທາງຈາກນະຄອນຫຼວງວຽງຈັນ ແຕ່ 8 ໂມງເຊົ້າ, ຂີ່ລົດໂດຍສານຫຼາຍສິບຊົ່ວໂມງ, ຈຶ່ງສາມາດເດີນທາງໄປເຖິງນະຄອນຄູເອີ ແຂວງຢຸນນານ ໃນເວລາປະມານ 7 ໂມງແລງຂອງມື້ທີ 2, ແຕ່ປັດຈຸບັນ, ຂີ່ລົດໄຟແມ່ນໃຊ້ເວລາພຽງ 8 ຊົ່ວໂມງກໍຮອດ.

ນາງ ໂຈ່ວວານຈິ່ນ ນັກສຶກສາລາວ ທີ່ຫາກໍ່ຮຽນຈົບຈາກວິທະຍາໄລຜູເອີ ໃນປີກາຍ, ໃນຂະນະ ທີ່ນັກສຶກສາສ່ວນຫຼາຍຫາກໍ່ຮຽນຈົບຈາກມະຫາວິທະຍາໄລ ແມ່ນມີຄວາມຫຍຸ້ງຍາກໃນການຊອກຫາວຽກເຮັດງານທຳ, ແຕ່ ນາງ ສາມາດຊອກໄດ້ວຽກເຮັດງານທຳ ຍ້ອນໄດ້ກຳໂອກາດຂອງຍຸກສະໄໝ.

ນາງ ໂຈ່ວວານຈິ່ນ ທີ່ຮຽນຂະແໜງວິຊາບັນຊີ ຢູ່ວິທະຍາໄລຜູເອີ ໄດ້ຍຶດໝັ້ນຄວາມຝັນຂອງຕົນມາໂດຍຕະຫຼອດ ແລະ ຕັ້ງໃຈຮຽນພາສາຈີນ ຢ່າງດຸໝັ່ນຂະຫຍັນພຽນ. ປັດຈຸບັນ, ນາງ ສາມາດເວົ້າພາສາຈີນ ໄດ້ຢ່າງລຽນໄຫຼ, ນາງ ເວົ້າຕໍ່ນັກຂ່າວວ່າ: ຂ້ອຍໄດ້ໂອກາດເຮັດວຽກທີ່ດີ, ນັ້ນກໍຄື ຂ້ອຍຈະໄປເຮັດວຽກຢູ່ທະນາຄານອຸດສາຫະກຳການຄ້າຈີນ ຫຼື ICBC ສາຂານະຄອນຫຼວງວຽງຈັນ, ນີ້ແມ່ນໂອກາດເຮັດວຽກທີ່ຊາວໜຸ່ມທັງຫຼາຍຢາກໄດ້ເຊັ່ນກັນ.

ພາຍຫຼັງເປີດນຳໃຊ້ທາງລົດໄຟ ລາວ-ຈີນ, ຊາວໜຸ່ມລາວ ທີ່ຮຽນຕໍ່ຢູ່ຈີນ ກໍສາມາດຊອກພົບໂອກາດການຄ້າ. ໃນເວລາ ທ້າວ ວາງຈີ້ເສິງ ທີ່ມາຈາກແຂວງຜົ້ງສາລີ ຮຽນຢູ່ວິທະຍາໄລຜູເອີ ໃນປີ 2019, ລາວ ໄດ້ສຳຜັດກັບສີມືປຸງແຕ່ງຊາຜູເອີ, ກໍເລີຍຕັດສິນໃຈຢາກນຳເອົາບົດຮຽນ ແລະ ແຜນການພັດທະນາອຸດສາຫະກຳຊາຂອງຈີນ ກັບເມືອບ້ານເກີດຂອງຕົນ ເພື່ອພັດທະນາອຸດສາຫະກຳຊາ ຢູ່ແຂວງຜົ້ງສາລີ ແລະ ຊຸກຍູ້ການພັດທະນາຂອງເສດຖະກິດທ້ອງຖິ່ນ.

ໃນໄລຍະຮຽນຢູ່ຈີນ, ທ້າວ ວາງຈີ້ເສິງ ໄດ້ໄປທ່ຽວຕະຫຼາດຊາຫຼາຍແຫ່ງ, ໄດ້ໂຄສະນາເຜີຍແຜ່ໃບຊາຜົ້ງສາລີ ແລະ ຫວັງວ່າ ຈະສາມາດດຳເນີນການຮ່ວມມືກັບນັກທຸລະກິດຈີນ ໄດ້ດີກວ່າເກົ່າ. ລາວ ເວົ້າວ່າ: ແຂວງຜົ້ງສາລີ ແມ່ນແຫຼ່ງຜະລິດຊາທີ່ດີ, ຄ້າຍຄືກັບນະຄອນຜູເອີ ຂອງຈີນ. ພາຍຫຼັງຂ້ອຍມາຮອດນະຄອນຜູເອີແລ້ວ, ໄດ້ເຫັນໃບຊາຊະນິດຕ່າງໆ ແລະ ຍີ່ຫໍ້ຕ່າງໆ, ສີມືປຸງແຕ່ງຊາຢູ່ແຫ່ງນີ້ ກໍທັນສະໄໝຫຼາຍ ແລະ ມີບັນຍາກາດການຄ້າທີ່ເຂັ້ມຂຸ້ນ ຊຶ່ງເປັນສິ່ງທີ່ສົນໃຈ ເພື່ອໃຫ້ຂ້ອຍຖອດຖອນບົດຮຽນໄດ້ຫຼາຍ.

ໃນອະນາຄົດ, ຂ້ອຍຢາກເປັນນາຍພາສາເພື່ອຊ່ວຍເພື່ອນມິດລາວ ແລະ ຈີນ ແລກປ່ຽນກັນໄດ້ດີກວ່າເກົ່າ.

“ຂ້ອຍຢາກເສີມຂະຫຍາຍທ່າແຮງທີ່ຮຽນຢູ່ຈີນຂອງຕົນ ເພື່ອທຳການຄ້າຂາຍ ລະຫວ່າງຈີນ ແລະ ລາວ.” “ທິວທັດທຳມະຊາດຂອງບ້ານເກີດຂອງຂ້ອຍງາມຫຼາຍ, ຍັງມີອາຫານທີ່ແຊບຫຼາຍຢ່າງ, ຍິນດີຕ້ອນຮັບນັກທ່ອງທ່ຽວຈີນໄປທ່ຽວປະເທດລາວ.”

ນັກຂ່າວ: ບົວໃສ

## ຄາດວ່າການຂົນສົ່ງຜູ້ໂດຍສານໃນໄລຍະບຸນກຸດຈີນປີ 2024 ຈະຫຼາຍກວ່າ 9 ຕື້ເທື່ອຄົນ

ໄລຍະຂົນສົ່ງບຸນກຸດຈີນປີ 2024 ໄດ້ເລີ່ມແຕ່ວັນທີ 26 ມັງກອນ ຫາ ວັນທີ 5 ມີນາ. ຫ້ອງການຖະແຫຼງຂ່າວ ຄະນະລັດຖະບານຈີນ ໄດ້ຈັດກອງປະຊຸມຖະແຫຼງຂ່າວໃນຫວ່າງມໍ່ໆມານີ້ວ່າ: ໃນໄລຍະຂົນສົ່ງບຸນກຸດຈີນປີນີ້, ຈຳນວນຜູ້ໂດຍສານ ທີ່ຈະເດີນທາງໄປມາລະຫວ່າງ ທ້ອງຖິ່ນຕ່າງໆຂອງຈີນ ຈະບັນລຸເຖິງ 9 ຕື້ເທື່ອຄົນ. ໃນນັ້ນ, ຜູ້ຂັບລົດສ່ວນຕົວຈະມີປະມານ 7,2 ຕື້ເທື່ອຄົນ, ຈຳນວນຜູ້ໂດຍສານທີ່ຈະເດີນທາງຕາມທາງລົດໄຟ, ທາງຫຼວງ, ທາງນ້ຳ ແລະ ທາງສາຍການບິນ ຈະບັນລຸເຖິງ 1,8 ຕື້ເທື່ອຄົນ.

ແຫຼ່ງຂ່າວ: ສຳນັກຂ່າວຊິນຮວາ, ຂ່າວ CCTV ແລະ ອື່ນໆ

## ຫໍພິພິທະພັນແກ້ວມໍລະກົດລານຢ້ອຍຸນນານ ໄດ້ເປີດບໍລິການຢ່າງເປັນທາງການ

ຫວ່າງມໍ່ໆມານີ້, ຫໍພິພິທະພັນແກ້ວມໍລະກົດລານຢ້ອນູ້ຈ່ຽງ ນະຄອນປົກຄອງຕົນເອງລີ້ຊູ ຫຼູສຸຍ (Lushui) ກິ່ງແຂວງນູ້ຈ່ຽງ (Nu Jiang) ແຂວງຢຸນນານ ໄດ້ເປີດບໍລິການຢ່າງເປັນທາງການ ຊຶ່ງເປັນຫໍພິພິທະພັນແກ້ວມໍລະກົດແຫ່ງທຳອິດຂອງຈີນ.



ຫໍພິພິທະພັນດັ່ງກ່າວ, ມີເນື້ອທີ່ກໍ່ສ້າງ 1.660 ຕາແມັດ ເຊິ່ງໄດ້ວາງສະແດງແກ້ວທຸກປະເພດທີ່ຂຸດຄົ້ນໄດ້ ໃນກິ່ງແຂວງນູ້ຈ່ຽງ ພ້ອມທັງແກ້ວມໍລະກົດ ທີ່ຂຸດຄົ້ນໄດ້ຈາກເຂດລຽບແມ່ນ້ຳນູ້ຈ່ຽງ, ຢົກເທີຽນທີ່ຂຸດຄົ້ນໄດ້ ຈາກເຂດລຽບຕາມແມ່ນ້ຳຕູລົງຈ່ຽງ (Dulong Jiang) ແລະ ຢົກລາຍຂອງແມ່ນ້ຳນູ້ຈ່ຽງ, ລວມມີແກ້ວປະເພດຕ່າງໆຫຼາຍກວ່າ 3 ໝື່ນອັນ ແລະ ມີມູນຄ່າຫຼາຍກວ່າ 1 ຕື້ຢວນ.

ແຫຼ່ງຂ່າວ: ໜັງສືພິມລາຍວັນຢຸນນານ

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com